**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງປ້ອງກັນຄວາມສະຫງົບ

ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ

ເລກທີ 399 /ປກສ.ນວ

ນະຄອນຫຼວງວຽງຈັນ,ວັນທີ 25 ຕຸລາ 2024

ຂາເຂົ້າ | ສຳນັກງານຫ້ອງການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ເລກທີ: 4898
ວັນທີ: 28.10.24

# ບົດລາຍງານ

**ຮຽນ:** ທ່ານເຈົ້າຄອງ ນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

**ເລື່ອງ:** ການເຄື່ອນໄຫວທົດລອງລະບົບທັນສະໄໝຄຸ້ມຄອງອາຊີບ-ພາຫະນະພິດເສດ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 653/ປກສ, ລົງວັນທີ 08 ພຶດສະພາ 2012 ວ່າດ້ວຍການຄຸ້ມຄອງອາຊີບ-ພາຫະນະພິດເສດ.
- ອີງຕາມ ການຈັດຕັ້ງປະຕິບັດຄຸ້ມຄອງອາຊີບ-ພາຫະນະພິເສດ ຕິດພັນກັບການເກັບລາຍຮັບຕາມລັດຖະບັນຍັດເລກທີ 02/ປປທ, ລົງວັນທີ 17 ມິຖຸນາ 2021 ແລະ ຄຳແນະນຳ ສະບັບເລກທີ 05/ປກສ, ລົງວັນທີ 23 ກຸມພາ 2022.
- ອີງຕາມ ແຈ້ງການຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 07/ຫວນວ, ລົງວັນທີ 07 ກຸມພາ 2024 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານຄຸ້ມຄອງອາຊີບ-ພາຫະນະພິເສດ.
- ອີງຕາມ ສັນຍາຮ່ວມມື ລະຫວ່າງ ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ກັບ ບໍລິສັດ ໂຊສະມາດເທັກ ຈຳກັດຜູ້ດຽວ, ຕາມສັນຍາສະບັບເລກທີ 298/ປກສ.ນວ, ລົງວັນທີ 20 ພຶດສະພາ 2024 ວ່າດ້ວຍການສ້າງລະບົບຄຸ້ມຄອງອາຊີບ-ພະຫະນະພິເສດ.

ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດລາຍງານມາຍັງທ່ານເຈົ້າຄອງ ນະຄອນຫຼວງວຽງຈັນ ກ່ຽວກັບຜົນການດຳເນີນງານໃນໄລຍະທີ່ຜ່ານມາຂອງວຽກງານຄຸ້ມຄອງອາຊີບ-ພາຫະນະພິດເສດ (14 ກຸ່ມວຽກຕາມລັດຖະບັນຍັດເລກທີ 002/ປປທ) ດ້ວຍລະບົບທີ່ທັນສະໄໝຮ່ວມກັບ ບໍລິສັດ ໂຊສະມາດເທັກ ຈຳກັດຜູ້ດຽວ; ກ່ອນຈະໄດ້ເລີ່ມທົດລອງລະບົບຄຸ້ມຄອງທີ່ທັນສະໄໝນີ້ ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ແມ່ນໄດ້ເຮັດຕາມລະບຽບທຸກຂັ້ນຕອນທາງດ້ານເອກະສານ, ນິຕິກຳ, ສຶກສາຄວາມເປັນໄປໄດ້, ປະຊຸມຮ່ວມກັນກັບຄະນະ ແລະ ພະແນກການທີ່ກ່ຽວຂ້ອງຫຼາຍຄັ້ງ ເຊິ່ງລະອຽດມີດັ່ງລຸ່ມນີ້:

**I. ຈຸດປະສົງຂອງໂຄງການ.**

ເພື່ອຍົກໃຫ້ເຫັນເຖິງຂັ້ນຕອນຂອງການປະຕິບັດງານ, ຜົນງານທັງກ່ອນ ແລະ ຫຼັງຈາກການທົດລອງລະບົບວ່າມີຜົນດີ ແລະ ຂໍ້ຫຍຸ້ງຍາກທີ່ຍັງຕ້ອງການສືບຕໍ່ແກ້ໄຂປັບປຸງການປະຕິບັດງານຄຸ້ມຄອງອາຊີບ-ພາຫະນະພິເສດໃຫ້ດີຂຶ້ນເລື້ອຍໆ ແນ່ໃສ່ຜົນປະໂຫຍດສູງສຸດຂອງປະເທດຊາດ ແລະ ຄວາມສະຫງົບຂອງສັງຄົມເປັນຕົ້ນ.

## II. ເນື້ອໃນ.

ການປະຕິບັດງານຂອງເຈົ້າໜ້າທີ່ ແລະ ບໍລິສັດ ແມ່ນຖືກດຳເນີນໄປໄດ້ດ້ວຍຄວາມເອົາໃຈໃສ່ ແລະ ໜັກແໜ້ນຕໍ່ການປະຕິບັດເພື່ອຜົນປະໂຫຍດລວມເປັນຫຼັກ ດ້ວຍການຄຸ້ມຄອງບັນດາຫົວໜ່ວຍທຸລະກິດທີ່ຢູ່ໃນ 14 ກຸ່ມວຽກອາຊີບ-ພາຫະນະພິເສດໃຫ້ເຂົ້າໃນລະບຽບ ແລະ ຄວາມສະຫງົບຂອງສັງຄົມເປັນຫຼັກ, ການລົງກວດສອບບັນດາຮ້ານທີ່ສະມັກໃຈເຂົ້າສູ່ລະບົບມີພາກສ່ວນທີ່ກ່ຽວຂ້ອງຕາມພາລະບົດບາດໃນແຕ່ລະຂັ້ນຂອງນະຄອນຫຼວງວຽງຈັນປະຕິບັດຕາມລະບຽບຫຼັກການທຸກຢ່າງ: ຂັ້ນບ້ານ, ປກສ ກຸ່ມ ແລະ ປກສ ເມືອງ ແລະ ປກສ ນະຄອນ ຫຼວງວຽງຈັນເຂົ້າຮ່ວມໃນການກວດສອບ ແລະ ແລກປ່ຽນບົດຮຽນດ້ວຍຄວາມເອົາໃຈໃສ່ ແລະ ຖອດຖອນບົດຮຽນຮ່ວມກັນກັບເຈົ້າຂອງທຸລະກິດ ຜົນຕອບຮັບເປັນໄປໄດ້ດ້ວຍດີ ແລະ ເອກະພາບຈາກບັນດາຄະນະທຸກພາກສ່ວນທີ່ເຂົ້າຮ່ວມ.

## III. ປະເມີນຜົນໄດ້ຮັບ.

### 3.1. ບັນຫາທີ່ພົບເຫັນກ່ອນການທົດລອງປະຕິບັດ.

ເນື່ອງຈາກປະຈຸບັນແມ່ນຍັງມີບັນດາທຸລະກິດເຫຼົ່ານີ້ເປີດໃຫ້ບໍລິການໃນຂອບເຂດທົ່ວປະເທດຢູ່ ຈຶ່ງຈຳເປັນຕ້ອງໄດ້ມີການຄຸ້ມຄອງຈາກເຈົ້າໜ້າທີ່ຈຶ່ງຈະມີຄວາມສະຫງົບ, ເຊິ່ງກ່ອນຈະເລີ່ມທົດລອງການນຳໃຊ້ລະບົບຄຸ້ມຄອງນີ້ແມ່ນໄດ້ພົບເຫັນບັນຫາຫຼາຍຢ່າງທີ່ຕ້ອງເລັ່ງແກ້ໄຂເພື່ອໃຫ້ສະພາບສັງຄົມມີຄວາມສະຫງົບ ແລະ ບັນຫາການເກັບພັນທະເຂົ້າລັດຍັງບໍ່ທັນລວມສູນ, ການຄຸ້ມຄອງຈັດການຍັງບໍ່ທັນທົ່ວເຖິງ ແລະ ການຄຸ້ມຄອງຈາກເຈົ້າໜ້າທີຍັງບໍ່ທັນຊັດເຈນຕໍ່ຜູ້ປະກອບການ, ມີບັນຫາມົ້ວສຸມທີ່ຍັງຄຸ້ມຄອງບໍ່ໄດ້ເຕັມປະສິດຕິພາບ ແລະ ຍັງບໍ່ມີກົດລະບຽບເຂົ້ານຳໃຊ້ບໍລິການທີ່ຊັດເຈນເທື່ອ.

### 3.2. ຈຸດດີຫຼັງຈາກທົດລອງປະຕິບັດຄຸ້ມຄອງດ້ວຍລະບົບທັນສະໄໝ.

ພາຍຫຼັງເລີ່ມທົດລອງການຄຸ້ມຄອງດ້ວຍລະບົບທີ່ທັນສະໄໝ ເຮັດໃຫ້ບັນຫາຫຼາຍໆດ້ານໄດ້ຮັບການແກ້ໄຂຢ່າງວ່ອງໄວ ແລະ ມີຄວາມຊັດເຈນຂຶ້ນ ເຊັ່ນ:

- ການຄຸ້ມຄອງຮັກສາຄວາມສະຫງົບແມ່ນມີປະສິດທິຜົນດີຂຶ້ນຫຼາຍເພາະທຸກຫົວໜ່ວຍທຸລະກິດທີ່ຢູ່ໃນລະບົບການຄຸ້ມຄອງແມ່ນຕ້ອງໄດ້ປະຕິບັດຕາມເງື່ອນໄຂທີ່ທາງເຈົ້າໜ້າທີ່ວາງອອກ ໃຫ້ແທດເໝາະກັບແຕ່ລະປະເພດທຸລະກິດຂອງຕົນເຊັ່ນ: ບາງທຸລະກິດຈຳເປັນຕ້ອງມີເຈົ້າໜ້າທີ່ຮັກສາຄວາມປອດໄພ, ບາງຂະບວນການດຳເນີນງານຂອງທຸລະກິດຕ້ອງໄດ້ປັບປຸງໃຫ້ສອດຄ່ອງກັບລະບົບຂອງວຽກງານປ້ອງກັນຄວາມສະຫງົບ, ບາງທຸລະກິດແມ່ນຕ້ອງໄດ້ຕິດຕັ້ງກ້ອງວົງຈອນຮັກສາຄວາມປອດໄພທີ່ຕິດຕາມໂດຍກົງຈາກເຈົ້າໜ້າທີ່.
- ການຕິດຕາມຂອງເຈົ້າໜ້າທີ່ແມ່ນມີການແຕ່ງຕັ້ງປະຈຳການ ເພື່ອສາມາດຕິດຕາມການເປີດບໍລິການຂອງທຸລະກິດໄດ້ຕະຫຼອດເວລາໂດຍຜ່ານລະບົບສູນກາງກ້ອງວົງຈອນຮັກສາຄວາມປອດໄພ ທີ່ຖືກຄຸ້ມຄອງໂດຍເຈົ້າໜ້າທີ່ຫ້ອງ 509 (ສະຖານທີ່ສູນການຄວບຄຸມຕັ້ງຢູ່ທີ່ຕຶກກອງບັນຊາການ ປກສ ນວ) ເຮັດໃຫ້ການສັ່ງ ປິດ-ເປີດ ແລະ ເຫັນເຫດການບໍ່ດີໄດ້ທັນເວລາ ແລະ ສົ່ງຄະນະລົງກວດສອບໄດ້ທັນທີຜ່ານລະບົບ GPS ຈຸດທີ່ຕັ້ງຂອງຮ້ານຢ່າງລະອຽດ ແລະ ວ່ອງໄວທີ່ສຸດ. ພ້ອມດຽວກັນນັ້ນຍັງມີລະບົບສັ່ງການໄດ້ດ້ວຍສຽງຈາກເຈົ້າໜ້າທີ່ຜູ້ຮັບຜິດຊອບສາມາດສົ່ງສຽງເຕືອນຜ່ານລະບົບຈາກສູນບັນຊາ ໄປເຖິງຮ້ານທີ່ເປີດບໍລິການໄດ້ໂດຍກົງ.
- ການເຫັນດີຈາກບັນດາຫົວໜ່ວຍທຸລະກິດທີ່ຢູ່ໃນການຄຸ້ມຄອງແມ່ນມີຜົນຕອບຮັບເປັນຢ່າງດີ ແລະ ມີຄວາມສະມັກໃຈໃນການຮັບຜິດຊອບຕໍ່ພັນທະທີ່ໄດ້ຕົກລົງກັນດ້ວຍຄວາມເຕັມໃຈ ແລະ ປະຕິບັດຕາມກົດລະບຽບວ່າງອອກໄດ້ເປັນຢ່າງດີ.
- ການປະຕິບັດໜ້າທີ່, ພາລະບົດບາດຂອງເຈົ້າໜ້າທີ່ມີຄວາມຊັດເຈນຂຶ້ນ, ຖືກຕ້ອງຕາມພາລະບົດບາດຕໍ່ການລົງກວດຕົວຈິງ ແລະ ຫຼຸດຜ່ອນຜູ້ທີ່ສວຍໃຊ້ໂອກາດໃນການປະຕິບັດບໍ່ສອດຄອງກັບຄວາມເປັນຈິງ.

- ການມອບພັນທະຕໍ່ພາກລັດເຕັມປະສິດທິພາບແບບລວມສູນ, ຕົງຕໍ່ເວລາ, ຊັດເຈນ, ກວດສອບໄດ້ດ້ວຍລະບົບທີ່ທັນສະໄໝ.

**IV. ຜົນຕອບຮັບຈາກການປະຕິບັດ.**

ໃນໄລຍະທີ່ຢູ່ໃນຊ່ວງທົດລອງລະບົບດັ່ງກ່າວຖືວ່າເປັນບາດກ້າວທີ່ດີ ແລະ ມີປະສິດຕິພາບສູງສຸດທີ່ສາມາດເຫັນໄດ້ໂດຍປະຈັກຕາ, ບໍ່ວ່າຈະເປັນດ້ານເຈົ້າໜ້າທີ່ໃນການປະຕິບັດຕາມພາລະບົດບາດໄດ້ຊັດເຈນຂຶ້ນ, ຫ້າວຫັນຂຶ້ນ ແລະ ສ້າງລາຍຮັບເຂົ້າສູ່ກົມກອງໄດ້ດີຂຶ້ນ, ບັນດາຫົວໜ່ວຍທຸລະກິດໃນອາຊີບ-ພາຫະນະພິດເສດມີຄວາມເຊື່ອໝັ້ນ ແລະ ສົ່ງເສີມການຄຸ້ມຄອງລະບົບນີ້ໃຫ້ປະຕິບັດຕໍ່ໄດ້ແບບຍືນຍົງ ແລະ ຂະຫຍາຍການຄຸ້ມຄອງໃຫ້ທົ່ວເຖິງ, ສັງຄົມມີຄວາມສະຫງົບ ແລະ ຍັງສືບຕໍ່ສ້າງລາຍຮັບໃຫ້ກັບປະຊາຊົນທີ່ດຳເນີນທຸລະກິດຕິດພັນກັບອາຊີບ-ພາຫະນະພິເສດ ນີ້ໄດ້ຕໍ່ໄປພາຍໃຕ້ການປະຕິບັດຕາມກົດໝາຍແຫ່ງ ສປປ ລາວ.

**V. ຂໍ້ຫຍຸ້ງຍາກໃນການປະຕິບັດໜ້າທີ່.**

ໃນປະຈຸບັນແມ່ນຍັງຕ້ອງໄດ້ໃຊ້ຄວາມພະຍາຍາມໃນການອະທິບາຍຄວາມເຂົ້າໃຈຕໍ່ກັບບັນດາພາກສ່ວນທີ່ກ່ຽວຂ້ອງຕໍ່ກັບວຽກງານການຄຸ້ມຄອງອາຊີບ-ພາຫະນະພິເສດ ບໍ່ວ່າຈະເປັນດ້ານນິຕິກຳ ແລະ ການປະຕິບັດຕົວຈິງເພື່ອໃຫ້ເຫັນຄວາມຖືກຕ້ອງຂອງການປະຕິບັດຕາມນິຕິກຳ ແລະ ໃຫ້ເຫັນເຖິງຜົນດີຂອງການຈັດຕັ້ງປະຕິບັດໂຄງການນີ້ ເພື່ອໃຫ້ບັນດາພາກສ່ວນອື່ນເຂົ້າໃຈຜັກດັນ ແລະ ສົ່ງເສີມເພື່ອສ້າງຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**VI. ຂໍ້ສະເໜີຂໍທິດຊີ້ນຳ.**

1) ຈາກບັນຫາທີ່ກ່າວມາຂ້າງເທິງເຫັນໄດ້ວ່າ: ການປະຕິບັດໃນຂັ້ນນະຄອນຫຼວງວຽງຈັນຂອງເຮົາຍັງຫຍຸ້ງຍາກຕໍ່ຄວາມເຂົ້າໃຈຢ່າງລະອຽດກ່ຽວກັບນິຕິກຳ, ພາລະບົດບາດໃນໜ້າທີ່, ຄວາມເຂົ້າໃຈໃນດ້ານຕ່າງໆໃນວຽກງານຄຸ້ມຄອງອາຊີບ-ພາຫະນະພິເສດ ໄດ້ຢ່າງລະອຽດ ແລະ ທົ່ວເຖິງເທື່ອ. ເນື່ອງຈາກຍັງຢູ່ໃນຊ່ວງການທົດລອງລະບົບ, ເຮັດໃຫ້ຍັງເກີດມີຄວາມບໍ່ເຂົ້າໃຈໃນບາງພາກສ່ວນ, ບາງຂະແໜງການ ເຮັດໃຫ້ຍັງພົບຂໍ້ຫຍຸ້ງຍາກໃນການດຳເນີນງານ.

2) ການຄຸ້ມຄອງອາຊີບ-ພາຫະນະພິເສດດ້ວຍລະບົບທັນສະໄໝ ຍັງມີຄວາມຈຳເປັນເພາະອາຊີບພິເສດເລົ່ານີ້ຍັງຄົງມີຢູ່ໃນສັງຄົມຖ້າພວກເຮົາບໍ່ຄຸ້ມຄອງໃຫ້ເຂົ້າສູ່ລະບົບ, ລະບຽບມັນຈະເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ.

**ດັ່ງນັ້ນ,** ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

**ເຊັນແທນ ຫົວໜ້າກອງບັນຊາການ**

ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ

ຫລຽນຄຳ ອ່ອນດາວົງ
Liankham ONDAVONG